ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===000===

ບໍລິສັດ ລາວໄອທີພັດທະນາ ຈຳກັດ
ໂທ: 021 562905
ອີເມວ: admin@laoitdev.com

ເລກທີ: 4364/LITD
ນະຄອນຫລວງວຽງຈັນ, ວັນທີ 20/11/2023

# ໜັງສືແຈ້ງການ

**ເຖິງ:** ບັນດາທ່ານລູກຄ້າຂອງ ບໍລິສັດ ລາວໄອທີພັດທະນາ ຈຳກັດ.
**ເລື່ອງ:** ແຈ້ງການເພີ່ມລາຄາ ອຸປະກອນ ແລະ ຕໍ່ປະກັນລະບົບຕ່າງໆ ຈຳນວນ 5%.

- ອີງຕາມ ສະພາບເສດຖະກິດໃນປະຈຸບັນ.
- ອີງຕາມອັດຕາການເໜັງຕີງຂອງອັດຕາແລກປ່ຽນເງິນຕາ.
- ອີງຕາມການປັບຂຶ້ນລາຄາຄ່າຄອງຊີບໃນປະຈຸບັນ.

ເນື່ອງຈາກສະຖານະການທາງເສດຖະກິດໃນປັດຈຸບັນ ລວມທັງອັດຕາເງິນເຟີ້ ແລະ ການອ່ອນຄ່າຂອງເງິນ ທາງບໍລິສັດ ລາວໄອທີພັດທະນາ ຈຳກັດ ຈຶ່ງມີຄວາມຈຳເປັນຕ້ອງເພີ່ມລາຄາ ບໍລິການຕໍ່ປະກັນລະບົບຕ່າງໆ (ແອັບພຣິເຄຊັນ, ເວັບໄຊ ), ລວມເຖິງຄ່າອຸປະກອນທີ່ຫ້ອງການຈຳໜ່າຍ ເພື່ອຮັກສາມາດຕະຖານການໃຫ້ບໍລິການທີ່ດີແກ່ລູກຄ້າທຸກທ່ານໄດ້.

ຜູ້ອຳນວຍການ ບໍລິສັດ ລາວໄອທີພັດທະນາ ຈຳກັດ, ຂໍຮຽນແຈ້ງເລື່ອງການປັບຂຶ້ນລາຄາມູນຄ່າຕໍ່ປະກັນເວັບໄຊ, ລະບົບ, ແອັບພລິເຄຊັນຕ່າງໆ ລວມເຖິງອຸປະກອນ ທີ່ບໍລິສັດ ລາວໄອທີພັດທະນາ ຈຳກັດ ໄດ້ໃຫ້ບໍລິການ **ປັບຂຶ້ນອີກ 5% , ເລີ່ມປະຕິບັດໃນປີ 2024 ເປັນຕົ້ນໄປ.**

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານລູກຄ້າຂອງບໍລິສັດ ລາວໄອທີພັດທະນາ ຈຳກັດ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

ຮຽນມາດ້ວຍຄວາມເຄົາລົບແລະນັບຖືຢ່າງສູງ

**ບໍລິສັດ ລາວໄອທີພັດທະນາ ຈຳກັດ**

ບໍລິສັດ ລາວ ໄອທີ ພັດທະນາ ຈຳກັດ Lao IT Development Co.,Ltd ນະຄອນຫລວງວຽງຈັນ

**ອຸໄທ ໄຊອຸດົມ**
**Outhai SAIOUDOM**